**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**
*************

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ — ເລກທີ: 09 /ມຕ.ທຄຕລ

ນະຄອນຫຼວງວຽງຈັນ, ວັນທີ: 06/05/2020

# ມະຕິ
## ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝວິສາມັນ
## ຄັ້ງທີ 2 ປະຈຳປີ 2020, ວັນທີ 06/05/2020

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝວິສາມັນ ຄັ້ງທີ 2 ປະຈາປີ 2020 ໄດ້ເປີດຂຶ້ນໃນເວລາ 14:00 ໂມງ ຂອງວັນທີ 06/05/2020 ທີ່ສຳນັກງານໃຫຍ່ ທຄຕລ ໂດຍການເປັນປະທານຂອງ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ, ປະທານສະພາບໍລິຫານ ທຄຕລ, ມີກຳມະການສະພາບໍລິຫານ ແລະ ຜູ້ສັງເກດການເຂົ້າຮ່ວມຕາມລາຍຊື່ຊ້ອນທ້າຍ.

**ກອງປະຊຸມໄດ້ປຶກສາຫາລື ແລະ ມີມະຕິຕົກລົງ ດັ່ງນີ້:**

1. ຮັບຮອງເອົາລະບຽບ ວ່າດ້ວຍ ນະໂຍບາຍສິນເຊື່ອ ເພື່ອແກ້ໄຂຜົນກະທົບຂອງລູກຄ້າສິນເຊື່ອຈາກການລະບາດຂອງພະຍາດ COVID-19 ແລະ ເຫັນດີໃຫ້ຄະນະອຳນວຍການ ຫຼື ຄະນະກຳມະການທີ່ກ່ຽວຂ້ອງ ອອກແຈ້ງການ, ຄຳແນະນຳ ຫຼື ຄູ່ມື ກ່ຽວກັບລູກຄ້າສິນເຊື່ອທີ່ໄດ້ຮັບຜົນກະທົບຈາກ COVID-19 ຕາມຄວາມເໝາະສົມໃນແຕ່ລະໄລຍະ;
2. ອະນຸຍາດໃຫ້ຄະນະກຳມະການສິນເຊື່ອ ໃນການປັບປຸງເງື່ອນໄຂຂອງສັນຍາລູກຄ້າສິນເຊື່ອດັ່ງນີ້:
    - 2.1. ລູກຄ້າສິນເຊື່ອທີ່ໄດ້ຮັບຜົນກະທົບຈາກ COVID-19 (ລູກຄ້າເກຣດ A ແລະ ເກຣດ B);
    - 2.2. ລູກຄ້າສິນເຊື່ອ ເກຣດ A (ນັບຈາກມື້ທີ່ສາຂາ ຫຼື ພະແນກຂາຍຜະລິດຕະພັນສິນເຊື່ອ ໄດ້ສົ່ງເອກະສານໃຫ້ພະແນກບໍລິຫານສິນເຊື່ອ ພິຈາລະນາ);
3. ຮັບຮອງຜົນການກວດສອບເອກະສານລາຍງານການເງິນປະຈຳປີ 2019 ແບບສະເພາະກິດຈະການ ຕາມມາດຖານສາກົນ (IFRS);
4. ຮັບຮອງເງິນປັນຜົນຮຸ້ນ ທຄຕລ ປະຈຳປີ 2019 ຈຳນວນ 813 ກີບ/ຮຸ້ນ ເພື່ອນຳສະເໜີກອງປະຊຸມຜູ້ຖືຮຸ້ນ ທຄຕລ ພິຈາລະນາຮັບຮອງ;
5. ຮັບຮອງວັນເວລາ ແລະ ສະຖານທີ່ສຳລັບກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈຳປີ 2019 ດັ່ງນີ້:
    - ວັນເວລາ: ວັນທີ 29 ພຶດສະພາ 2020, ເວລາ 14:30 ໂມງ;
    - ສະຖານທີ່: ໂຮງແຮມແລນມາກແມ່ຂອງຣິເວີໄຊ;

6. ຮັບຮອງເອົາເນື້ອໃນຂອງແຕ່ລະວາລະກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈຳປີ 2019 ເຊິ່ງປະກອບດ້ວຍວາລະດັ່ງລຸ່ມນີ້:

1) ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນປະຈຳປີ 2018;
2) ລາຍງານໂດຍຫຍໍ້ ກ່ຽວກັບ ສະພາບການດຳເນີນງານຂອງ ທຄຕລ ໃນປີ 2019;
3) ພິຈາລະນາ ແລະ ຮັບຮອງເອົາຜົນການດຳເນີນທຸລະກິດປະຈຳປີ 2019;
4) ພິຈາລະນາ ແລະ ຮັບຮອງເງິນປັນຜົນປະຈຳປີ 2019;
5) ພິຈາລະນາ ແລະ ຮັບຮອງເອົາແຜນການປີ 2020;
6) ພິຈາລະນາ ແລະ ຮັບຮອງເອົາຜູ້ກວດສອບອິດສະຫຼະ ປະຈຳປີ 2020;
7) ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງສະພາບໍລິຫານຊຸດໃໝ່.

ດັ່ງນັ້ນ, ຈຶ່ງໄດ້ອອກມະຕິສະບັບນີ້ໄວ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

**ປະທານສະພາບໍລິຫານ**
**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ບຸນເຫຼືອ ສິນໄຊວໍຣະວົງ